*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 113-120*
https://doi.org/10.69692/SUJMRD12(Fast *track)113*

# Attitudes of Service Business Operators Towards Policies Promoting the Use of Kip in Luang Prabang Capital

**Kanchana SAYAVONG*, Thipphavanh DUANGVILAYKEO[1], and Sithivikhone PHENGSAVAT[1]**

*Department of Economics, Faculty of Economics and Tourism, Souphanouvong University, Lao PDR*

*****Correspondence:*** *Kanchana SAYAVONG, Luang Prabang Province, Tel: +85620 29154289, E-mail:* Kanchanasayavong@gmail.com

[1]*Faculty of Economics and Tourism, Souphanouvong University, Lao PDR*

***Article Info:***
***Submitted: March 28, 2026***
***Revised: April 17, 2026***
***Accepted: April 22, 2026***

**Abstract**

This study aims to: (1) examine the perceptions and understanding of service business entrepreneurs in Luang Prabang regarding the use of the Lao Kip; and (2) investigate the level of opinions of these entrepreneurs toward the policy promoting the use of the Lao Kip issued by the Bank of the Lao PDR. The research adopts a survey design, employing a questionnaire as the primary data collection instrument. Data were collected from a sample of 80 service business establishments in Luang Prabang, including hotels, guesthouses, restaurants, and tourism companies. The data were analyzed using frequency, percentage, mean, and standard deviation. The findings reveal that:

1) The level of perception and understanding of service business entrepreneurs regarding the policy promoting the use of the Lao Kip in Luang Prabang is relatively high, accounting for 85.93%. Among the dimensions, the highest level of perception and understanding is found in promotional communication related to the policy (93.12%), followed by business financial aspects related to the policy (88.75%). The lowest, but still high, levels are in trust toward the policy and emotional responses to the policy, both accounting for 80.93%.

2) The overall attitudes of service business entrepreneurs in Luang Prabang toward the Lao Kip promotion policy of the Bank of the Lao PDR are at a high level ($\overline{X}$ = 3.96, SD = 0.57). The highest level of agreement is observed in the promotional aspect ($\overline{X}$ = 4.28, SD = 0.48), followed by motivational encouragement ($\overline{X}$ = 4.03, SD = 0.71), monitoring and follow-up ($\overline{X}$ = 3.98, SD = 0.56), and dissemination ($\overline{X}$ =3.98, SD = 0.72), respectively.

**Keywords:** *Perception, understanding, policy on the use of the Lao Kip, business entrepreneurs*

## 1. ພາກສະເໜີ

ໃນສະພາບການເສດຖະກິດປະຈຸບັນ ຂອງ ສປປ ລາວ ການນຳໃຊ້ເງິນຕ່າງປະເທດ ໂດຍສະເພາະ ເງິນບາດ ແລະ ເງິນໂດລາ ຍັງມີບົດບາດສູງໃນການແລກປ່ຽນຊື້ຂາຍ ແລະ ການໃຫ້ບໍລິການ ພາຍໃນປະເທດ ເຮັດໃຫ້ການໃຊ້ເງິນກີບ (LAK) ຍັງບໍ່ແຜ່ຫຼາຍເທົ່າທີ່ຄວນ (Bank of the Lao PDR, 2022). ສະພາບດັ່ງກ່າວ ສົ່ງຜົນໃຫ້ການຄວບຄຸມນະໂຍບາຍເງິນຕາ ແລະ ຄວາມສະໝ່ຳສະເໝີຂອງລະບົບ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ເງິນຕາໃນປະເທດ ປະສົບກັບຂໍ້ຈຳກັດ (International Monetary Fund, 2023).

ດັ່ງນັ້ນ, ລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ ໄດ້ອອກນະໂຍບາຍສົ່ງເສີມໃຫ້ນຳໃຊ້ເງິນກີບໃນການຊຳລະຄ່າສິນຄ້າ ແລະ ບໍລິການ ເພື່ອຫຼຸດຜ່ອນການພຶ່ງພາເງິນຕາຕ່າງປະເທດ ແລະ ເສີມສ້າງສະມັດຖະພາບທາງເສດຖະກິດ (Bank of the Lao PDR, 2021). ນະໂຍບາຍນີ້ ໄດ້ຖືກນຳໃຊ້ຢ່າງກວ້າງຂວາງໃນຫຼາຍພາກສ່ວນ ໂດຍສະເພາະ ພາກທຸລະກິດບໍລິການ ເຊັ່ນ: ໂຮງແຮມ, ຮ້ານອາຫານ ແລະ ການຂົນສົ່ງ ທີ່ມີການຮັບຊຳລະຈາກລູກຄ້າທັງພາຍໃນ ແລະ ຕ່າງປະເທດ.

ແຕ່ຢ່າງໃດກໍ່ຕາມ ການນຳນະໂຍບາຍໄປປະຕິບັດ ຍັງພົບອຸປະສັກ ເຊັ່ນ: ຄວາມຜັນຜວນຂອງອັດຕາແລກປ່ຽນ, ຄວາມເຊື່ອໝັ້ນຕໍ່ເງິນກີບ ແລະ ພຶດຕິກຳຂອງຜູ້ປະກອບການ (World Bank, 2022). ທັດສະນະຄະຕິ (Attitude) ຂອງຜູ້ປະກອບການ ເປັນປັດໄຈສຳຄັນ ທີ່ກຳນົດພຶດຕິກຳການຍອມຮັບ ຫຼື ຕ້ານທານນະໂຍບາຍ (Ajzen, 1991). ດັ່ງນັ້ນ, ການສຶກສາທັດສະນະຄະຕິຂອງກຸ່ມນີ້ ຈຶ່ງມີຄວາມຈຳເປັນ ເພື່ອເຂົ້າໃຈສະພາບຈິງ ແລະ ນຳໄປປັບປຸງນະໂຍບາຍໃຫ້ມີປະສິດທິຜົນຍິ່ງຂຶ້ນ.

ການສຶກສານີ້ ມີຄວາມສຳຄັນຫຼາຍດ້ານ ຄື 1) ດ້ານນະໂຍບາຍ ຊ່ວຍໃຫ້ພາກລັດ ແລະ Bank of the Lao PDR ເຂົ້າໃຈທັດສະນະ ແລະ ອຸປະສັກ ຂອງຜູ້ປະກອບການ ເພື່ອປັບປຸງນະໂຍບາຍໃຫ້ສອດຄ່ອງ ແລະ ນຳໃຊ້ໄດ້ຈິງ. 2) ດ້ານເສດຖະກິດ ການສົ່ງເສີມໃຊ້ເງິນກີບ ຊ່ວຍຫຼຸດການພຶ່ງພາເງິນຕ່າງປະເທດ ແລະ ເສີມສ້າງສະເຖິນສະເຫຼີມທາງເສດຖະກິດໃນລະຍະຍາວ (International Monetary Fund, 2023). 3) ດ້ານວິຊາການ ຊ່ວຍເພີ່ມພູນຄວາມຮູ້ ກ່ຽວກັບພຶດຕິກຳທາງເສດຖະສາດ ແລະ ທິດສະດີທັດສະນະຄະຕິ (Ajzen, 1991) ໃນບໍລິບົດຂອງປະເທດກຳລັງພັດທະນາ ແລະ 4) ດ້ານປະຕິບັດ ຜົນການສຶກສາ ສາມາດນຳໄປໃຊ້ເປັນແນວທາງ ໃນການອອກມາດຕະການ ຫຼື ແຜນການ ເພື່ອສົ່ງເສີມການໃຊ້ເງິນກີບໃຫ້ເກີດຜົນຈິງ.

ແຂວງຫຼວງພະບາງ ເປັນແຂວງທີ່ມີບົດບາດສຳຄັນທາງດ້ານການທ່ອງທ່ຽວ, ການບໍລິການ ແລະ ການຄ້າ ຂອງ ສປປ ລາວ. ໂຄງສ້າງທາງເສດຖະກິດຂອງແຂວງນີ້ ອາໄສທຸລະກິດບໍລິການເປັນຫຼັກ ເຊັ່ນ: ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ບໍລິສັດນຳທ່ຽວ, ການຂົນສົ່ງ ແລະ ກິດຈະການບໍລິການອື່ນໆ ທີ່ກ່ຽວພັນກັບນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ໃນຂະນະດຽວກັນ ເມື່ອ ປະເທດລາວປະສົບກັບບັນຫາຄວາມຜັນຜວນຂອງອັດຕາແລກປ່ຽນ, ອັດຕາເງິນເຟີ້ ແລະ ການນຳໃຊ້ເງິນຕ່າງປະເທດຢ່າງແຜ່ຫຼາຍໃນການຊຳລະສິນຄ້າ-ບໍລິການ, ພາກລັດ ຈຶ່ງໄດ້ຍົກລະດັບມາດຕະການສົ່ງເສີມການນຳໃຊ້ເງິນກີບພາຍໃນປະເທດ ໂດຍກຳນົດໃຫ້ການກຳນົດລາຄາສິນຄ້າ ແລະ ບໍລິການຕ້ອງອີງໃສ່ເງິນກີບເປັນຫຼັກ, ແນວທາງນີ້ຖືກເນັ້ນຊັດເຈນໃນເອກະສານຂອງ ທະນາຄານແຫ່ງ ສປປ ລາວ ແລະ ຂໍ້ກຳນົດຂອງພາກລັດ ທີ່ກ່ຽວຂ້ອງ (National Assembly, 2022).

ສຳລັບ ແຂວງຫຼວງພະບາງ ສະພາບຂອງຜູ້ປະກອບການທຸລະກິດບໍລິການຕໍ່ນະໂຍບາຍດັ່ງກ່າວ ສາມາດພິຈາລະນາໄດ້ວ່າຢູ່ໃນລັກສະນະ "ຍອມຮັບໃນເຊີງນະໂຍບາຍ ແຕ່ຍັງປະຕິບັດໄດ້ບໍ່ເຕັມທີ່ໃນເຊີງປະຕິບັດ". ເຫດຜົນສຳຄັນ ແມ່ນເນື່ອງຈາກພາກບໍລິການໃນຫຼວງພະບາງມີຄວາມກ່ຽວພັນໂດຍກົງກັບນັກທ່ອງທ່ຽວ, ການຄ້າຊາຍແດນ, ແລະ ການຊຳລະທີ່ອາດຈະຜູກພັນກັບເງິນບາດ ຫຼື ເງິນໂດລາ. ນອກຈາກນັ້ນ ລາຍງານຂອງ World Bank ແລະ International Monetary Fund (IMF) ຊີ້ໃຫ້ເຫັນວ່າ ໃນໄລຍະຜ່ານມາເງິນກີບເຄີຍອ່ອນຄ່າຢ່າງຫຼາຍຕໍ່ເງິນຕາຫຼັກ, ຊຶ່ງສົ່ງຜົນໃຫ້ຜູ້ປະກອບການບາງສ່ວນຍັງຂາດຄວາມໝັ້ນໃຈໃນການຖືຄອງ ຫຼື ກຳນົດລາຄາເປັນເງິນກີບພຽງຢ່າງດຽວ (The World Bank, 2024 & International Monetary Fund, 2026).

ໃນທາງປະຕິບັດ ຜູ້ປະກອບການຂະໜາດນ້ອຍ ເຊັ່ນ ຮ້ານອາຫານທ້ອງຖິ່ນ, ຮ້ານຂາຍເຄື່ອງ ແລະ ບໍລິການທົ່ວໄປ ມັກຈະນຳໃຊ້ເງິນກີບເປັນຫຼັກໃນການກຳນົດລາຄາ ແລະ ຮັບຊຳລະ. ແຕ່ສຳລັບທຸລະກິດທີ່ພຶ່ງພານັກທ່ອງທ່ຽວຕ່າງປະເທດສູງ ເຊັ່ນ ໂຮງແຮມ, ເຮືອນພັກ, ບໍລິສັດນຳທ່ຽວ ແລະ ບໍລິການຂົນສົ່ງບາງປະເພດ ຍັງພົບການກຳນົດລາຄາຫຼືການເທີບລາຄາອີງໃສ່ເງິນຕ່າງປະເທດ. ພາບການນີ້ເກີດຈາກຄວາມສະດວກໃນການຊຳລະຂອງລູກຄ້າ, ການປົກປ້ອງຄວາມສ່ຽງຈາກອັດຕາແລກປ່ຽນ ແລະ ຄວາມກັງວົນຕໍ່ຕົ້ນທຶນທີ່ອາດປັບຕົວຕາມການອ່ອນຄ່າຂອງເງິນກີບ. ໃນດ້ານນີ້ ຂໍ້ມູນຂອງ World Bank ສະທ້ອນວ່າ ການອ່ອນຄ່າຂອງເງິນກີບໃນຊ່ວງ 2023–2024 ມີຄວາມກ່ຽວພັນກັບແຮງກົດດັນດ້ານລາຄາ ແລະ ຄວາມເຊື່ອໝັ້ນໃນການໃຊ້ເງິນກີບ. ຢ່າງໃດກໍ່ຕາມ ລາຍງານຫຼ້າສຸດຂອງ World Bank ແລະ International Monetary Fund ກໍລະບຸວ່າ ສະພາບເສດຖະກິດໃນປີ 2025 ເລີ່ມມີສະຖຽນລະພາບຂຶ້ນບາງສ່ວນ, ໂດຍອັດຕາແລກປ່ຽນແລະເງິນເຟີ້ຜ່ອນຄາຍລົງ ຊຶ່ງອາດຈະເປັນເງື່ອນໄຂທີ່ຊ່ວຍໃຫ້ຜູ້ປະກອບການຍອມຮັບການໃຊ້ເງິນກີບຫຼາຍຂຶ້ນ (The World Bank, 2024 & International Monetary Fund, 2026).

ສະນັ້ນ, ດ້ວຍຄວາມເປັນມາ ແລະ ເຫດຜົນທີ່ກ່າວມາຂ້າງເທິງ ຜູ້ສຶກສາຈຶ່ງສົນໃຈໃນຫົວຂໍ້ນີ້ ໂດຍມີຈຸດປະສົງ ຂອງການສຶກສາຄື: 1) ສຶກສາຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ ໃນນະຄອນຫຼວງພະບາງ ແລະ 2) ສຶກສາລະດັບຄວາມຄິດເຫັນຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ຂອງທະນາຄານແຫ່ງ ສປປ ລາວ.

## 2. ອຸປະກອນ ແລະ ວິທີການ

ການສຶກສາຄົ້ນຄວ້າວິໄຈໃນຄັ້ງນີ້ ຜູ້ສຶກສາແມ່ນໄດ້ໃຊ້ວິທີການສຶກສາແບບສຳຫຼວດ (Survey Reseach) ເພື່ອສຶກສາທັດສະນະຄະຕິຂອງຜູ້ປະກອບການທຸລະກິດບໍລິການ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ໃນນະຄອນຫຼວງພະບາງ, ເຊິ່ງໄດ້ມີວິທີການດຳເນີນການດັ່ງນີ້:

### 2.1 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງ ທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນບັນດາຫົວໜ່ວຍທຸລະກິດພາຍໃນ ນະຄອນຫຼວງພະບາງ ທີ່ມີການໃຫ້ບໍລິການ ເຊັ່ນ: ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ບໍລິສັດທ່ອງທ່ຽວ. ໂດຍໃຊ້ວິທີການສຸ່ມຕົວຢ່າງແບບເຈາະຈົງ (Purposive Sampling) ຕາມວິທີຂອງ Creswell (2014) & Etikan et al. (2016) ເຊິ່ງໄດ້ຂະໜາດຕົວຢ່າງເທົ່າກັບ 80 ຫົວໜ່ວຍທຸລະກິດ.

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນເປັນແບບສອບຖາມປະກອບມີ 2 ພາກສ່ວນ ດັ່ງລາຍລະອຽດລຸ່ມນີ້:

ພາກສ່ວນທີ 1: ຂໍ້ມູນກ່ຽວກັບ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ ໃນນະຄອນຫຼວງພະບາງ ປະກອບມີ ດ້ານຄວາມເຊື່ອຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ, ດ້ານຄວາມຮູ້ສຶກຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ, ດ້ານສື່ການໂຄສະນາການຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ແລະ ດ້ານການເງິນທາງທຸລະກິດຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ. ເຊິ່ງເປັນລັກສະນະແບບສອບຖາມປາຍປິດ ເລືອກໄດ້ພຽງ 1 ຄຳຕອບເທົ່ານັ້ນ.

ພາກສ່ວນທີ 2: ຂໍ້ມູນກ່ຽວກັບ ທັດສະນະຄະຕິຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ຂອງທະນາຄານແຫ່ງ ສປປ ລາວ ປະກອບມີ ດ້ານການໂຄສະນາ, ດ້ານການເຜີຍແຜ່, ດ້ານການປຸກລະດົມຈິດໃຈ ແລະ ດ້ານການລົງຕິດຕາມ. ລັກສະນະແບບສອບຖາມເປັນແບບ ມາດຕາສ່ວນ (Likert scale) ເປັນຄຳຖາມປາຍປິດ ເຊິ່ງແບ່ງອອກເປັນ 5 ລະດັບໃນການໃຫ້ຄະແນນ (Likert, 1932) ດັ່ງນີ້:

ລະດັບຄະແນນ 5 ໝາຍເຖິງ ເຫັນດີຫຼາຍທີ່ສຸດ
ລະດັບຄະແນນ 4 ໝາຍເຖິງ ເຫັນດີຫຼາຍ
ລະດັບຄະແນນ 3 ໝາຍເຖິງ ເຫັນດີປານກາງ
ລະດັບຄະແນນ 2 ໝາຍເຖິງ ເຫັນດີໜ້ອຍ
ລະດັບຄະແນນ 1 ໝາຍເຖິງ ບໍ່ເຫັນດີ

➢ **ການຫາຄຸນນະພາບຂອງເຄື່ອງມື (Validity and Reliability)**

- ການກວດສອບຄວາມທ່ຽງ (Content Validity)

ໂດຍຜູ້ຄົ້ນຄວ້າ ໄດ້ນຳແບບສອບຖາມໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານ ພິຈາລະນາ ຄວາມສອດຄ່ອງລະຫວ່າງ ຂໍ້ຄຳຖາມ ແລະ ຈຸດປະສົງ ຂອງການຄົ້ນຄວ້າ ເຊິ່ງເອີ້ນວ່າ ດັດຊະນີຄວາມສອດຄ່ອງ (Index of Item Objective Congruence: IOC). ສະນັ້ນ, ຄ່າດັດຊະນີຄວາມສອດຄ່ອງ ທີ່ສາມາດໃຊ້ໄດ້ແມ່ນຕ້ອງມີຄ່າຕັ້ງແຕ່ 0.50-1.00 ຈຶ່ງຖືວ່າ ແບບສອບຖາມ ສາມາດໄປທົດລອງໃຊ້ໄດ້ ແຕ່ຕ້ອງໄດ້ປັບປຸງຕາມຄຳແນະນຳຂອງຜູ້ຊ່ຽວຊານ ເພື່ອໃຫ້ໄດ້ແບບສອບຖາມທີ່ດີ (DeVellis, 2016). ຜົນການທົດສອບ ໄດ້ຄ່າ IOC=0.90 ຖືວ່າຜ່ານເກນທີ່ກຳນົດ ແລະ ສາມາດໄປທົດລອງໃຊ້ໄດ້.

- **ການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມ (Reliability)**

ຜູ້ຄົ້ນຄວ້າ ໄດ້ນຳແບບສອບຖາມ ທີ່ຜ່ານການພິຈາລະນາ ຂອງຊ່ຽວຊານ ໄປທົດສອບ (Pilot Test) ເພື່ອໃຫ້ແນ່ໃຈວ່າ ຜູ້ຕອບແບບສອບຖາມ ມີຄວາມເຂົ້າໃຈກົງກັນ ແລະ ຕອບຄຳຖາມໄດ້ຕາມຄວາມເປັນຈິງທຸກຂໍ້ ລວມທັງຂໍ້ຄຳຖາມມີຄວາມສອດຄ່ອງທາງສະຖິຕິ. ດັ່ງນັ້ນ, ຜູ້ຄົ້ນຄວ້າ ໄດ້ນຳແບບສອບຖາມໄປທົດສອບກັບກຸ່ມຄົນ ທີ່ບໍ່ແມ່ນກຸ່ມເປົ້າໝາຍ ຈຳນວນ 30 ຄົນ, ຫຼັງຈາກນັ້ນ ນຳມາວິເຄາະຄວາມເຊື່ອໝັ້ນຂອງແບບສອບຖາມ ໂດຍໃຊ້ສະຖິຕິ ແລະ ພິຈາລະນາຈາກຄ່າສຳປະສິດ $\alpha$ ຂອງຄອນບາດ (Cronbach's Alpha Coefficient) ຂອງຄຳຖາມໃນແຕ່ລະດ້ານ ທີ່ມີຄ່າເທົ່າກັບ 0.70 ຫຼື 70% ຂຶ້ນໄປ ສະແດງວ່າ ແບບສອບຖາມທີ່ຈະນຳໄປໃຊ້ກັບກຸ່ມຕົວຢ່າງເປົ້າໝາຍ ມີຄວາມໜ້າເຊື່ອຖື ແລະ ສາມາດນຳແບບສອບຖາມໄປເກັບກຳຂໍ້ມູນກັບກຸ່ມຕົວຢ່າງຈິງໄດ້ (Cronbach, 1951). ຜົນການທົດສອບ ໄດ້ຄ່າ $\alpha=0.86$ ຖືວ່າຜ່ານເກນທີ່ກຳນົດ ແລະ ສາມາດໄປທົດລອງໃຊ້ກັບກຸ່ມຕົວຢ່າງທີ່ກຳນົດໄດ້.

### 2.3 ການຮວບຮວມຂໍ້ມູນ

ການຮວບຮວມຂໍ້ມູນເປັນຈຸດເລີ່ມຕົ້ນທີ່ສຳຄັນຂອງການເກັບກຳຂໍ້ມູນ ແລະ ເປັນຂັ້ນຕອນຢ່າງໜຶ່ງຂອງການວິໄຈ ເຊິ່ງສະແດງອອກໃນການຮວບຮວມ, ບັນທຶກ ແລະ ວິໄຈ ບັນດາຂໍ້ມູນທີ່ມີຢູ່ນັ້ນຢ່າງເປັນລະ ບົບຈາກແຫຼ່ງຂໍ້ມູນທີ່ສຳຄັນດັ່ງນີ້:

#### 2.3.1 ຂໍ້ມູນຂັ້ນໜຶ່ງ (Primary Data)

ຂໍ້ມູນຂັ້ນໜຶ່ງ ແມ່ນຮວບຮວມຈາກການຕອບແບບສອບຖາມໂດຍສອບຖາມຈາກຜູ້ປະກອບການທຸລະກິດບໍລິການ ພາຍໃນນະຄອນຫຼວງພະບາງ, ດ້ວຍການແຈກຢາຍແບບສອບຖາມໃຫ້ຜູ້ປະກອບການທຸລະກິດບໍລິການໂດຍກົງ ເພື່ອເກັບເອົາຂໍ້ມູນໃນຄັ້ງນີ້.

#### 2.3.2 ຂໍ້ມູນຂັ້ນສອງ (Secondary Data)

ຂໍ້ມູນຂັ້ນສອງ ເປັນແຫຼ່ງຂໍ້ມູນໄດ້ຈາກການທົບທວນເອກະສານທີ່ກ່ຽວຂ້ອງໄດ້ແກ່: ເອກະສານທີ່ກ່ຽວຂ້ອງ ກັບຄຸນນະພາບການໃຫ້ບໍລິການ, ຄວາມຄິດເຫັນຕໍ່ການໃຫ້ບໍລິການ, ການຄົ້ນຄວ້າທີ່ກ່ຽວຂ້ອງ, ບົດຈົບຊັ້ນ, ບົດຄວາມທາງວິຊາການ, ບົດວິທະຍານິພົນ ແລະ ນອກຈາກນັ້ນ ຍັງໄດ້ຂໍ້ມູນຕ່າງໆທີ່ກ່ຽວຂ້ອງຈາກເວບໄຊທ໌.

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

## 2.4 ການວິເຄາະຂໍ້ມູນ

1) ສຳລັບຂໍ້ມູນໃນ ພາກສ່ວນທີ 1 ຂອງແບບສອບຖາມ ແລະ ຕອບຕາມຈຸດປະສົງທີໜຶ່ງ ຂອງການຄົ້ນຄວ້າ ແມ່ນໄດ້ວິເຄາະຫາ ຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage) ແລ້ວນຳມາອະທິບາຍຜົນຕາມອັດຕາຄ່າສ່ວນຮ້ອຍ.

2) ສຳລັບຂໍ້ມູນໃນ ພາກສ່ວນທີ 2 ຂອງແບບສອບຖາມ ແລະ ຕອບຕາມຈຸດປະສົງທີສອງ ຂອງການຄົ້ນຄວ້າ ແມ່ນໄດ້ວິເຄາະຫາ ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (Standard Division) ແລ້ວນຳມາອະທິບາຍຜົນຕາມອັດຕາຄ່າສ່ວນຮ້ອຍ, ໃຊ້ເກນແປຄວາມໝາຍຕາມແນວຄວາມຄິດຂອງ Kothari (2004) ສຳລັບອະທິບາຍທັດສະນະຄະຕິ ຂອງຜູ້ປະກອບການທຸລະກິດບໍລິການໃນ ນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ຂອງທະນາຄານແຫ່ງ ສປປ ລາວ ມີດັ່ງນີ້:

-ຄະແນນສະເລ່ຍ 4.21 - 5.00 ໝາຍເຖິງ ເຫັນດີຫຼາຍທີ່ສຸດ

-ຄະແນນສະເລ່ຍ 3.41 - 4.20 ໝາຍເຖິງ ເຫັນດີຫຼາຍ

-ຄະແນນສະເລ່ຍ 2.61 - 3.40 ໝາຍເຖິງ ເຫັນດີປານກາງ

-ຄະແນນສະເລ່ຍ 1.81 - 2.60 ໝາຍເຖິງ ເຫັນດີໜ້ອຍທີ່ສຸດ

-ຄະແນນສະເລ່ຍ 1.00 - 1.80 ໝາຍເຖິງ ບໍ່ເຫັນດີ

# 3. ຜົນໄດ້ຮັບ

## 3.1 ຜົນການວິເຄາະຂໍ້ມູນ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ

1) ດ້ານຄວາມເຊື່ອຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ

ຈາກການວິເຄາະຂໍ້ມູນກ່ຽວກັບ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ດ້ານຄວາມເຊື່ອຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ພົບວ່າ ສ່ວນໃຫຍ່ ແມ່ນເຂົ້າໃຈກ່ຽວກັບເນື້ອໃນ ແລະ ເປົ້າໝາຍຂອງນະໂຍບາຍສົ່ງເສີມການນຳໃຊ້ເງິນກີບຂອງ ທຫລ ວາງອອກເປັນຢ່າງດີ ມີ 70 ຄົນ ເທົ່າກັບ 87.50%, ຕໍ່ມາແມ່ນມີຄວາມເຊື່ອວ່າ ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບນີ້ຈະຊ່ວຍສ້າງຄວາມໝັ້ນຄົງໃຫ້ແກ່ທຸລະກິດຂອງທ່ານໃນໄລຍະຍາວ ມີ 69 ຄົນ86.25%, ມີຄວາມເຊື່ອວ່າ ລັດຖະບານມີຄວາມຈິງໃຈໃນການບັງຄັບໃຫ້ຜູ້ປະກອບການເຊື່ອໃນການປະຕິບັດນະໂຍບາຍດັ່ງກ່າວ ມີ 61 ຄົນ 76.25% ແລະ ສຸດທ້າຍແມ່ນເຊື່ອວ່າການຮັບເງິນກີບເທົ່ານັ້ນ ຈະຫຼຸດຜ່ອນຄວາມສ່ຽງຈາກການເໜັງຕີງຂອງອັດຕາແລກປ່ຽນໃນທຸລະກິດຂອງຜູ້ປະກອບການທຸລະກິດ ມີ 59 ຄົນ 73.75%

2) ດ້ານຄວາມຮູ້ສຶກຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ

ຈາກການວິເຄາະຂໍ້ມູນກ່ຽວກັບ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ດ້ານຄວາມຮູ້ສຶກຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ພົບວ່າ ສ່ວນໃຫຍ່ມີຄວາມຮູ້ສຶກໃນທາງບວກ (ເຊັ່ນ: ພູມໃຈ ຫຼື ສະໜັບສະ ໜູນ) ຕໍ່ນະໂຍບາຍການສົ່ງເສີມເງິນກີບ ມີ 77 ຄົນ ເທົ່າກັບ 96.25%, ຕໍ່ມາແມ່ນ ຮູ້ສຶກວ່າລູກຄ້າ/ນັກທ່ອງທ່ຽວຕ່າງປະເທດຍອມຮັບການຊຳລະດ້ວຍເງິນກີບໂດຍບໍ່ມີບັນຫາ ມີ 64 ຄົນ ເທົ່າກັບ 80.00%, ສຸດທ້າຍແມ່ນ ພໍໃຈຕໍ່ຄວາມພະຍາຍາມຂອງທະນາຄານກາງໃນການອຳນວຍຄວາມສະດວກໃຫ້ຫົວໜ່ວຍທຸລະກິດໃນການແລກປ່ຽນ ແລະ ການປະຕິບັດຕາມນະໂຍບາຍບໍ່ເປັນການສ້າງຄວາມຫຍຸ້ງຍາກ ຫຼື ເພີ່ມພາລະໃຫ້ແກ່ທຸລະກິດຂອງຂອງຜູ້ປະກອບທຸລະກິດບໍລິການ ມີ 59 ຄົນ ເທົ່າກັບ 73.75% ເທົ່າກັນ.

3) ດ້ານສື່ການໂຄສະນາການຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ

ຈາກການວິເຄາະຂໍ້ມູນກ່ຽວກັບ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ດ້ານສື່ການໂຄສະນາການຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ພົບວ່າ ສ່ວນໃຫຍ່ຄິດວ່າ ເງິນກີບເປັນເງິນສະກຸນເງິນຕາປະຈຳຊາດລາວ ແລະ ເປັນເອກກະລັກຂອງຊາດລາວ ມີ 79 ຄົນ ເທົ່າກັບ 98.75%, ຕໍ່ມາແມ່ນ ການນຳໃຊ້ເງິນກີບແມ່ນຮັກຊາດ ແລະ ຢູ່ເມືອງລາວຕ້ອງໃຊ້ແຕ່ເງິນຕາພາຍໃນ (ເງິນກີບ) ມີ 76 ຄົນ ເທົ່າກັບ 95.00%, ການນຳໃຊ້ເງິນຕາພາຍໃນປະເທດ (ເງິນກີບ) ຊ່ວຍໃຫ້ປະເທດຊາດມີສະຖຽນລະພາບທາງດ້ານລາຄາ ມີ 75 ຄົນ ເທົ່າກັບ 93.75% ແລະ ສຸດທ້າຍແມ່ນ ເງິນກີບສາມາດໃຊ້ຈ່າຍຊຳລະໄດ້ທົ່ວປະເທດ ແລະ ສ້າງມູນຄ່າໃຫ້ແກ່ເງິນຕາພາຍໃນປະເທດ (ເງິນກີບ) ມີ 68 ຄົນ ເທົ່າກັບ 85.00%.

4) ດ້ານການເງິນທາງທຸລະກິດຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ

ຈາກການວິເຄາະຂໍ້ມູນກ່ຽວກັບ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ດ້ານການເງິນທາງທຸລະກິດຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ພົບວ່າ ສ່ວນໃຫຍ່ທຸລະກິດມີຄວາມສາມາດດ້ານລະບົບການເງິນ ເຊັ່ນ: ເຄື່ອງຈັກ POS, ການຊຳລະຜ່ານ QR Code ພຽງພໍທີ່ຈະຮັບເງິນກີບໄດ້ຢ່າງສະດວກ ມີ 75 ຄົນ ເທົ່າກັບ 93.75%, ຕໍ່ມາແມ່ນມີຄວາມຮູ້ ແລະ ຄວາມເຂົ້າໃຈ ພຽງພໍໃນການຄຸ້ມຄອງຄວາມສ່ຽງດ້ານອັດຕາແລກປ່ຽນ ເມື່ອຮັບເງິນກີບເປັນຫຼັກ ມີ 71 ຄົນ ເທົ່າກັບ 88.75% ແລະ ສຸດທ້າຍແມ່ນ ງົບປະມານຂອງທຸລະກິດ ສາມາດຮອງຮັບການປ່ຽນແປງໄປສູ່ການຊຳລະດ້ວຍເງິນກີບ 100% ມີ 67 ຄົນ ເທົ່າກັບ 83.75%.

ສະຫຼຸບແລ້ວ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ ຕໍ່ນະໂຍ ບາຍສົ່ງເສີມການນຳໃຊ້ເງິນກີບ ໃນນະຄອນຫຼວງພະບາງ ແມ່ນກວມເອົາເປີເຊັນທີ່ສູງຫຼາຍສົມຄວນ ເທົ່າກັບ 85.93%, ໃນນັ້ນ ຜູ້ປະກອບການ ມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈຫຼາຍກວ່າໝູ່ ແມ່ນດ້ານສື່ການໂຄສະນາການຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ກວມເອົາ 93.12%, ຕໍ່ມາແມ່ນດ້ານການເງິນທາງທຸລະກິດຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ກວມເອົາ 88.75% ແລະ ສຸດທ້າຍແມ່ນ ດ້ານຄວາມເຊື່ອຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ແລະ ດ້ານຄວາມຮູ້ສຶກຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ກວມເອົາ 80.93% ເທົ່າກັນ.

## 3.2 ຜົນການວິເຄາະຂໍ້ມູນ ທັດສະນະຄະຕິຂອງຜູ້ປະກອບການທຸລະກິດບໍລິການໃນ ນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ຂອງທະນາຄານແຫ່ງ ສປປ ລາວ

**1) ດ້ານການໂຄສະນາ**

ທັດສະນະຄະຕິ ຂອງຜູ້ປະກອບການຕໍ່ດ້ານການໂຄສະນາໂດຍລວມແລ້ວ ແມ່ນເຫັນດີໃນລະດັບຫຼາຍທີ່ສຸດ ເຊິ່ງມີ $\overline{X}$ =4.28 ແລະ SD=0.48, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ຕໍ່ກັບ ທະນາຄານແຫ່ງ ສປປ ລາວ ທີ່ມີການໂຄສະນາ

ເຜີຍແຜ່ນະໂຍບາຍການໃຊ້ເງິນກີບຢ່າງທົ່ວເຖິງ ແລະ ເຂົ້າໃຈງ່າຍ ເຊິ່ງມີ $\bar{X}$=4.11 ແລະ SD= 0.86, ຮອງລົງມາແມ່ນມາດຕະການຄວບຄຸມການແລກປ່ຽນເງິນຕາຕ່າງປະເທດຂອງລັດຖະບານ ເພີ່ມຄວາມເຊື່ອໝັ້ນໃຫ້ທ່ານໃນການຮັບເງິນກີບ ມີ $\bar{X}$=3.80 ແລະ SD=0.96, ຕໍ່ມາແມ່ນ ການຈັດຕັ້ງປະຕິບັດກົດໝາຍກ່ຽວກັບການໃຊ້ເງິນກີບ ມີຄວາມເຂັ້ມງວດ ແລະ ຕໍ່ເນື່ອງ ໃນຫຼວງພະບາງ ມີ $\bar{X}$=3.76 ແລະ SD=0.86 ແລະ ສຸດທ້າຍ ແມ່ນອັດຕາແລກປ່ຽນເງິນຕາທີ່ປະກາດໂດຍທະນາຄານທຸລະກິດ ມີຄວາມຍຸຕິທຳ ແລະ ສອດຄ່ອງກັບການດຳເນີນທຸລະກິດຂອງຜູ້ປະກອບການ ມີ $\bar{X}$=3.69 ແລະ SD=0.95.

**2) ດ້ານການເຜີຍແຜ່**

ທັດສະນະຄະຕິຂອງຜູ້ປະກອບການ ຕໍ່ດ້ານການເຜີຍແຜ່ ໂດຍລວມແລ້ວໃຫ້ຄວາມສຳຄັນໃນລະດັບຫຼາຍ ເຊິ່ງມີ $\bar{X}$=3.98 ແລະ SD=0.72, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ຕໍ່ກັບ ດ້ານການນຳໃຊ້ເງິນກີບຢ່າງດຽວຈະເຮັດໃຫ້ທຸລະກິດຂອງຕົນມີລາຍຮັບເພີ່ມຂຶ້ນ ເຊັ່ນ: ຍ້ອນການຫຼຸດຜ່ອນຕົ້ນທຶນການແລກປ່ຽນ ມີ $\bar{X}$=4.01 ແລະ SD=0.95, ຮອງລົງມາແມ່ນການນຳໃຊ້ເງິນກີບຢ່າງດຽວຈະເຮັດໃຫ້ທຸລະກິດຂອງຕົນຫຼຸດຜ່ອນຄວາມຫຍຸ້ງຍາກໃນການບັນຊີ ແລະ ການເງິນ ມີ $\bar{X}$=3.91 ແລະ SD=0.87, ຕໍ່ມາແມ່ນເຊື່ອວ່າ ນະໂຍບາຍນີ້ຈະເພີ່ມຄວາມເຊື່ອໝັ້ນຂອງລູກຄ້າໃນ ນະຄອນຫຼວງພະບາງ ຕໍ່ທຸລະກິດຂອງຕົນ ມີ $\bar{X}$=4.09 ແລະ SD=0.74 ແລະ ສຸດທ້າຍ ຄິດວ່າ ການປະຕິບັດຕາມນະໂຍບາຍເປັນການເສຍປຽບ ຕໍ່ຄູ່ແຂ່ງທີ່ຍັງຮັບເງິນຕາຕ່າງປະເທດ ມີ $\bar{X}$=3.90 ແລະ SD=0.74.

**3) ດ້ານການປຸກລະດົມຈິດໃຈ**

ທັດສະນະຄະຕິຂອງຜູ້ປະກອບການ ຕໍ່ດ້ານການປຸກລະດົມຈິດໃຈ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີ $\bar{X}$=4.03 ແລະ SD=0.71, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ແມ່ນ ຕົນຈະສົ່ງເສີມ ແລະ ນຳໃຊ້ເງິນກີບ, ສະໜັບສະໜູນໃຫ້ທຸກຫົວໜ່ວຍທຸລະກິດບໍລິການໃຊ້ຈ່າຍແຕ່ເງິນກີບ ເຮັດໃຫ້ເສດຖະກິດໃນ ນະຄອນຫຼວງພະບາງ ຂະຫຍາຍຕົວໄດ້ $\bar{X}$=4.19 ແລະ SD=0.71, ຕໍ່ມາແມ່ນ ເຊີນຊວນຫົວໜ່ວຍທຸກິດດ້ວຍກັນຊ່ວຍກັນເປັນເຈົ້າການໃນການຕຳນິ ແລະ ກ່າວເຕືອນ ເມື່ອພົບເຫັນສະພາບການປະຕິບັດທີ່ລະເມີດຕໍ່ລະບຽບກົດໝາຍ ເຊັ່ນ: ການນຳໃຊ້ເງິນຕາຕ່າງປະເທດຊະຊາຍ ແລະ ການແລກປ່ຽນເງິນຕາຕ່າງປະເທດຊະຊາຍຂອງລູກຄ້າ ມີ $\bar{X}$=4.00 ແລະ SD=0.93, ຕົນເອງໄດ້ເປັນເຈົ້າການຄິດໄລ່ຕິດລາຄາເປັນເງິນກີບ ສຳລັບແຕ່ລະປະເພດລາຄາສິນຄ້າ ຕ້ອງເປັນເງິນກີບເທົ່ານັ້ນ ມີ $\bar{X}$=3.99 ແລະ SD=0.75, ແລະ ສຸດທ້າຍແມ່ນຕົນໄດ້ຮ່ວມມືກັບບັນດາຫົວໜ່ວຍທຸລະກິດ ການບໍລິການພ້ອມພຽງກັນຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊັ່ນ: ການໂຄສະນາສິນຄ້າ ແລະ ຄ່າບໍລິການເປັນເງິນກີບເທົ່ານັ້ນ ມີ $\bar{X}$=3.94 ແລະ SD=0.85 ແລະ ສຸດທ້າຍແມ່ນ.

**4) ດ້ານການລົງຕິດຕາມ**

ທັດສະນະຄະຕິຂອງຜູ້ປະກອບການ ຕໍ່ດ້ານການລົງຕິດຕາມ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີ $\bar{X}$=3.98 ແລະ SD=0.56, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ແມ່ນຜູ້ປະກອບການໄດ້ຕິດປະກາດລາຄາສິນຄ້າ ແລະ ຄ່າບໍລິການລວມ ທັງການປະຕິບັດພັນທະຕ່າງໆຂອງລັດ-ເອກະຊົນຕ້ອງນຳໃຊ້ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບເທົ່ານັ້ນ ມີ $\bar{X}$=4.09 ແລະ SD=0.62, ຮອງລົງມາແມ່ນໄດ້ນຳໃຊ້ໄດ້ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບຢ່າງຮັດກຸມ ເພື່ອນຳໃຊ້ຕິດຕາມມາດຕະການຄຸ້ມຄອງອັດຕາແລກປ່ຽນພາຍໃນທຸລະກິດຂອງຕົນໄດ້ ມີ $\bar{X}$=4.05 ແລະ SD=0.63, ຕໍ່ມາແມ່ນໄດ້ຕິດຕາມ, ຄຸ້ມຄອງການຮັບ-ການຈ່າຍເງິນເປັນເງິນກີບໃນການຊຳລະຄ່າສິນຄ້າ ແລະ ບໍລິການພາຍໃນທຸລະກິດໄດ້ $\bar{X}$=3.95 ແລະ SD=0.89 ແລະ ສຸດທ້າຍແມ່ນໄດ້ຕິດຕາມຕໍ່ຜູ້ກະທຳຜິດລະບຽບກົດໝາຍບ້ານເມືອງ ທາງດ້ານການນຳໃຊ້ເງິນຕາ ຕໍ່ກັບນະໂຍບາຍສົ່ງເສີມການນຳໃຊ້ເງິນກີບນຳ ທຫລ ສາຂາແຂວງຫຼວງພະບາງ ວາງອອກເປັນແຕ່ລະໄລຍະ ເພື່ອປະຕິບັດຕາມນະໂຍບາຍດັ່ງກ່າວໃຫ້ທັນເວລາ ມີ $\bar{X}$=3.86 ແລະ SD=0.56.

ສະຫຼຸບແລ້ວ ທັດສະນະຄະຕິຂອງຜູ້ປະກອບການທຸລະກິດບໍລິການໃນ ນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ຂອງທະນາຄານແຫ່ງ ສປປ ລາວ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີ $\bar{X}$=3.96 ແລະ SD=0.57, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ແມ່ນ ຕໍ່ດ້ານການໂຄສະນາ ມີ $\bar{X}$=4.28 ແລະ SD=0.48, ຕໍ່ມາແມ່ນດ້ານການປຸກລະດົມຈິດໃຈ ມີ $\bar{X}$=4.03 ແລະ SD=0.71, ດ້ານການລົງຕິດຕາມ ມີ $\bar{X}$=3.98 ແລະ SD=0.56,ແລະ ສຸດທ້າຍແມ່ນ ດ້ານການເຜີຍແຜ່ ມີ $\bar{X}$=3.98 ແລະ SD=0.72.

## 4. ວິພາກຜົນ

### 4.1 ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ

ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ ໃນດ້ານຄວາມເຊື່ອຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ພົບວ່າ ສ່ວນໃຫຍ່ ແມ່ນເຂົ້າໃຈກ່ຽວກັບເນື້ອໃນ ແລະ ເປົ້າໝາຍຂອງນະໂຍບາຍສົ່ງເສີມການນຳໃຊ້ເງິນກີບຂອງ ທຫລ ວາງອອກເປັນຢ່າງດີ, ມີຄວາມເຊື່ອວ່າ ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບນີ້ຈະຊ່ວຍສ້າງຄວາມໝັ້ນຄົງໃຫ້ແກ່ທຸລະກິດຂອງທ່ານໃນໄລຍະຍາວ, ມີຄວາມເຊື່ອວ່າ ລັດຖະບານ ມີຄວາມຈິງໃຈໃນການບັງຄັບໃຫ້ຜູ້ປະກອບການເຊື່ອໃນການປະຕິບັດນະໂຍບາຍດັ່ງກ່າວ ແລະ ສຸດທ້າຍແມ່ນເຊື່ອວ່າການຮັບເງິນກີບເທົ່ານັ້ນ ຈະຫຼຸດຜ່ອນຄວາມສ່ຽງຈາກການເໜັງຕີງຂອງອັດຕາແລກປ່ຽນໃນທຸລະກິດຂອງຜູ້ປະກອບການທຸລະກິດ. ຕໍ່ດ້ານຄວາມຮູ້ສຶກຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບສ່ວນໃຫຍ່ມີຄວາມຮູ້ສຶກໃນທາງບວກ ເຊັ່ນ: ພູມໃຈ ຫຼື ສະໜັບສະໜູນ ຕໍ່ນະໂຍບາຍການສົ່ງເສີມເງິນກີບ, ຮູ້ສຶກວ່າລູກຄ້າ/ນັກທ່ອງທ່ຽວຕ່າງປະເທດ ຍອມຮັບການຊຳລະດ້ວຍເງິນກີບ ໂດຍບໍ່ມີບັນຫາ ແລະ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ພໍໃຈຕໍ່ຄວາມພະຍາຍາມຂອງທະນາຄານກາງໃນການອໍານວຍຄວາມສະດວກໃຫ້ຫົວໜ່ວຍທຸລະກິດໃນການແລກປ່ຽນ ແລະ ການປະຕິບັດຕາມນະໂຍບາຍບໍ່ເປັນການສ້າງຄວາມຫຍຸ້ງຍາກ ຫຼື ເພີ່ມພາລະໃຫ້ແກ່ທຸລະກິດຂອງຂອງຜູ້ປະກອບທຸລະກິດບໍລິການ. ຕໍ່ດ້ານສື່ການໂຄສະນາການຕໍ່ນະໂຍບາຍສົ່ງເສີມການນໍາໃຊ້ເງິນກີບ ສ່ວນໃຫຍ່ຄິດວ່າ ເງິນກີບເປັນເງິນສະກຸນເງິນຕາປະຈໍາຊາດລາວ ແລະ ເປັນເອກະລັກຂອງຊາດລາວ, ການນໍາໃຊ້ເງິນກີບແມ່ນຮັກຊາດ ແລະ ຢູ່ເມືອງລາວຕ້ອງໃຊ້ແຕ່ເງິນຕາພາຍໃນ (ເງິນກີບ), ການນໍາໃຊ້ເງິນຕາພາຍໃນປະເທດ (ເງິນກີບ) ຊ່ວຍໃຫ້ປະເທດຊາດມີສະຖຽນລະພາບທາງດ້ານລາຄາ ແລະ ເງິນກີບສາມາດໃຊ້ຈ່າຍຊໍາລະໄດ້ທົ່ວປະເທດ ແລະ ສ້າງມູນຄ່າໃຫ້ແກ່ເງິນຕາພາຍໃນປະເທດ (ເງິນກີບ). ຕໍ່ດ້ານການເງິນທາງທຸລະກິດຕໍ່ນະໂຍບາຍສົ່ງເສີມການນໍາໃຊ້ເງິນກີບ ສ່ວນໃຫຍ່ທຸລະກິດມີຄວາມສາມາດດ້ານລະບົບການເງິນ ເຊັ່ນ: ເຄື່ອງຈັກ POS, ການຊໍາລະຜ່ານ QR Code ພຽງພໍທີ່ຈະຮັບເງິນກີບໄດ້ຢ່າງສະດວກ, ມີຄວາມຮູ້ ແລະ ຄວາມເຂົ້າໃຈ ພຽງພໍໃນການຄຸ້ມຄອງຄວາມສ່ຽງດ້ານອັດຕາແລກປ່ຽນ ເມື່ອຮັບເງິນກີບເປັນຫຼັກ ແລະ ງົບປະມານຂອງທຸລະກິດ ສາມາດຮອງຮັບການປ່ຽນແປງໄປສູ່ການຊໍາລະດ້ວຍເງິນກີບ. ສອດຄ່ອງກັບການຄົ້ນຄວ້າຂອງ Xaiyavong (2016) ເລື່ອງ ການໃຊ້ເງິນຕາຕ່າງປະເທດແທນເງິນກີບໃນລາວ ເປັນງານທີ່ກ່ຽວຂ້ອງຫຼາຍທີ່ສຸດກັບຫົວຂໍ້ນີ້ ເພາະໄດ້ສຶກສາປັດໄຈທີ່ກໍານົດວ່າ ປະຊາຊົນ ແລະ ບັນດາທຸລະກິດໃນລາວຫັນໄປນໍາໃຊ້ເງິນຕ່າງປະເທດແທນເງິນກີບ ເຊິ່ງຜົນການສຶກສາພົບວ່າ ສ່ວນຕ່າງອັດຕາດອກເບ້ຍ ແລະ ຄວາມຄາດຫວັງຕໍ່ອັດຕາແລກປ່ຽນເປັນປັດໄຈສໍາຄັນຕໍ່ການຖືເງິນຕາຕ່າງປະເທດ ຂໍ້ຄົ້ນພົບນີ້ຊີ້ໃຫ້ເຫັນວ່າ ຄວາມຮັບຮູ້ເກືອບທັງໝົດຂອງຜູ້ໃຊ້ເງິນຕໍ່ຄວາມໝັ້ນຄົງຂອງເງິນກີບ ແລະ ປະໂຫຍດຂອງການຖືສະກຸນເງິນອື່ນ ມີອິດທິພົນຕໍ່ພຶດຕິກໍາການເລືອກໃຊ້ເງິນ, ດັ່ງນັ້ນ ຈຶ່ງສາມາດນໍາມາໃຊ້ເປັນຖານຄິດໄດ້ວ່າ ຖ້າຜູ້ປະກອບການຮັບຮູ້ວ່າ ເງິນກີບມີຄວາມສ່ຽງ ຫຼື ບໍ່ໝັ້ນຄົງ ພວກເຂົາກໍ່ອາດຈະບໍ່ເຕັມໃຈນໍາໃຊ້ເງິນກີບໃນການຮັບຊໍາລະ. ຍັງສອດຄ່ອງກັບບົດລາຍງານຂອງ International Monetary Fund (2013) ໃນສ່ວນ ການຫຼຸດການໃຊ້ເງິນໂດລາໃນເສດຖະກິດ ສປປ ລາວ ລະບຸວ່າ ລາວເຄີຍຫຼຸດອັດຕາການຖືເງິນຕ່າງປະເທດລົງໄດ້ຈາກ 76% ໃນປີ 2000 ມາເປັນ 43% ໃນປີ 2012 ແລະ ຍົກໃຫ້ເຫັນວ່າ ຄວາມເຊື່ອໝັ້ນໃນເງິນກີບເພີ່ມຂຶ້ນຄຽງຄູ່ກັບສະຖຽນລະພາບທາງມະຫາພາກ ແລະ ຍັງເນັ້ນຕື່ມວ່າ ລັດຖະບານລາວ ໄດ້ດໍາເນີນມາດຕະການ ເພື່ອສົ່ງເສີມການໃຊ້ເງິນກີບແລ້ວ ແຕ່ການຫຼຸດການໃຊ້ເງິນຕ່າງປະເທດຈະຍືນຍົງໄດ້ຈໍາເປັນຕ້ອງອາໄສສະຖຽນລະພາບດ້ານນະໂຍບາຍເປັນໄລຍະຍາວ, ຈຸດນີ້ສໍາຄັນຕໍ່ການສຶກສາຄັ້ງນີ້ ເພາະຊີ້ໃຫ້ເຫັນວ່າ "ຄວາມຮັບຮູ້" ຂອງຜູ້ປະກອບການຕໍ່ຄວາມໝັ້ນຄົງຂອງເງິນກີບ ເປັນຕົວກໍານົດສໍາຄັນຕໍ່ການຍອມຮັບນະໂຍບາຍ ແລະ ຍັງສອດຄ່ອງກັບ JICA (2022) ໄດ້ສໍາຫຼວດລະບົບຊໍາລະສະໄໝໃໝ່ໃນລາວ ແລະ ລະບຸວ່າ ລາວຍັງມີການໃຊ້ເງິນບາດ ແລະ ໂດລາ ຄຽງຄູ່ກັບເງິນກີບ ຈຶ່ງຈໍາເປັນຕ້ອງເພີ່ມການຊໍາລະເປັນເງິນທ້ອງຖິ່ນ, ບົດລາຍງານນີ້ ຍັງກ່າວເຖິງບົດບາດຂອງ mobile payment ແລະ QR payment ໃນການສົ່ງເສີມການຈ່າຍເງິນເປັນເງິນກີບ, ສະນັ້ນ ຄວາມເຂົ້າໃຈຕໍ່ຊ່ອງທາງຊໍາລະໃໝ່ ແລະ ຄວາມສະດວກໃນການຮັບຈ່າຍ ອາດເປັນຕົວປ່ຽນຮ່ວມທີ່ກະທົບຕໍ່ການຍອມຮັບເງິນກີບຂອງຜູ້ປະກອບການ.

### 4.2 ທັດສະນະຄະຕິຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນໍາໃຊ້ເງິນກີບຂອງທະນາຄານແຫ່ງ ສປປ ລາວ

ທັດສະນະຄະຕິຂອງຜູ້ປະກອບການ ຕໍ່ດ້ານການໂຄສະນາ ແມ່ນເຫັນດີໃນລະດັບຫຼາຍທີ່ສຸດ, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນຫຼາຍກວ່າໝູ່ຕໍ່ກັບ ທະນາຄານແຫ່ງ ສປປ ລາວ ທີ່ມີການໂຄສະນາເຜີຍແຜ່ນະໂຍບາຍການໃຊ້ເງິນກີບຢ່າງທົ່ວເຖິງ ແລະ ເຂົ້າໃຈງ່າຍ, ຮອງລົງມາແມ່ນມາດຕະການຄວບຄຸມການແລກປ່ຽນເງິນຕາຕ່າງປະເທດຂອງລັດຖະບານ ເພີ່ມຄວາມເຊື່ອໝັ້ນໃຫ້ທ່ານໃນການຮັບເງິນກີບ, ຕໍ່ມາແມ່ນການຈັດຕັ້ງປະຕິບັດກົດໝາຍກ່ຽວກັບການໃຊ້ເງິນກີບ ມີຄວາມເຂັ້ມງວດ ແລະ ຕໍ່ເນື່ອງ ໃນຫຼວງພະບາງ ແລະ ແມ່ນອັດຕາແລກປ່ຽນເງິນຕາທີ່ປະກາດໂດຍ ທະນາຄານທຸລະກິດ ມີຄວາມຍຸຕິທໍາ ແລະ ສອດຄ່ອງກັບການດໍາເນີນທຸລະກິດຂອງຜູ້ປະກອບການ. ຕໍ່ດ້ານການເຜີຍແຜ່ ແມ່ນເຫັນດີໃນລະດັບຫຼາຍ, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນຫຼາຍກວ່າໝູ່ຕໍ່ກັບ ດ້ານການນໍາໃຊ້ເງິນກີບຢ່າງດຽວຈະເຮັດໃຫ້ທຸລະກິດຂອງຕົນມີລາຍຮັບເພີ່ມຂຶ້ນ ເຊັ່ນ: ຍ້ອນການຫຼຸດຜ່ອນຕົ້ນທຶນການແລກປ່ຽນ, ການນໍາໃຊ້ເງິນກີບຢ່າງດຽວຈະເຮັດໃຫ້ທຸລະກິດຂອງຕົນຫຼຸດຜ່ອນຄວາມຫຍຸ້ງຍາກໃນການບັນຊີ ແລະ ການເງິນ, ຄິດວ່າ ນະໂຍບາຍນີ້ຈະເພີ່ມຄວາມເຊື່ອໝັ້ນ ຂອງລູກຄ້າໃນນະຄອນຫຼວງພະບາງ ຕໍ່ທຸລະກິດຂອງຕົນ ແລະ ການປະຕິບັດຕາມນະໂຍບາຍເປັນການເສຍປຽບ ຕໍ່ຄູ່ແຂ່ງທີ່ຍັງຮັບເງິນຕາຕ່າງປະເທດ. ຕໍ່ດ້ານການປຸກລະດົມຈິດໃຈ ແມ່ນຢູ່ໃນລະດັບຫຼາຍ, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນຫຼາຍກວ່າໝູ່ແມ່ນ ຕົນເອງໄດ້ເປັນເຈົ້າການຄິດໄລ່ຕິດລາຄາເປັນເງິນກີບ ສໍາລັບແຕ່ລະປະເພດລາຄາສິນຄ້າ ຕ້ອງເປັນເງິນກີບເທົ່ານັ້ນ, ມີການເຊີນຊວນຫົວໜ່ວຍທຸະກິດດ້ວຍກັນຊ່ວຍກັນເປັນເຈົ້າການໃນການຕໍານິ ແລະ ກ່າວເຕືອນ ເມື່ອພົບເຫັນສະພາບການປະຕິບັດທີ່ລະເມີດຕໍ່ລະບຽບກົດໝາຍ ເຊັ່ນ: ການນໍາໃຊ້ເງິນຕາຕ່າງປະເທດຊະຊາຍ ແລະ ການແລກປ່ຽນເງິນຕາຕ່າງປະເທດຊະຊາຍຂອງລູກຄ້າ, ຕົນໄດ້ຮ່ວມມືກັບບັນດາຫົວໜ່ວຍທຸລະກິດ ການບໍລິການພ້ອມພຽງກັນຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊັ່ນ: ການໂຄສະນາສິນຄ້າ ແລະ ຄ່າບໍລິການເປັນເງິນກີບ ເທົ່ານັ້ນ ແລະ ຕົນຈະສົ່ງເສີມ ແລະ ນໍາໃຊ້ເງິນກີບ, ສະໜັບສະໜູນໃຫ້ທຸກຫົວໜ່ວຍທຸລະກິດບໍລິການໃຊ້ຈ່າຍແຕ່ເງິນກີບ ເຮັດໃຫ້ເສດຖະກິດໃນ ນະຄອນຫຼວງພະບາງ ຂະຫຍາຍຕົວໄດ້ ແລະ ຕໍ່ດ້ານການລົງຕິດຕາມ ແມ່ນຢູ່ໃນລະດັບຫຼາຍ, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ ແມ່ນຜູ້ປະກອບການໄດ້ຕິດປະກາດລາຄາສິນຄ້າ ແລະ ຄ່າບໍລິການລວມ ທັງການປະຕິບັດພັນທະຕ່າງໆຂອງລັດ-ເອກະຊົນ ຕ້ອງນໍາໃຊ້ນະໂຍບາຍສົ່ງເສີມການນໍາໃຊ້ເງິນກີບເທົ່ານັ້ນ, ໄດ້ນໍາໃຊ້ໄດ້ນະໂຍບາຍສົ່ງເສີມການນໍາໃຊ້ເງິນກີບຢ່າງຮັດກຸມ ເພື່ອນໍາໃຊ້ຕິດຕາມມາດຕະການຄຸ້ມຄອງອັດຕາແລກປ່ຽນພາຍໃນທຸລະກິດຂອງຕົນໄດ້, ໄດ້ຕິດຕາມ ຄຸ້ມຄອງການຮັບ-ການຈ່າຍເງິນເປັນເງິນກີບໃນການຊໍາລະຄ່າສິນຄ້າ ແລະ ບໍລິການພາຍໃນທຸລະກິດໄດ້ ແລະ ໄດ້ຕິດຕາມຕໍ່ຜູ້ກະທໍາຜິດລະບຽບກົດໝາຍບ້ານເມືອງ ທາງດ້ານ

ການນຳໃຊ້ເງິນຕາ ຕໍ່ກັບນະໂຍບາຍສົ່ງເສີມການນຳໃຊ້ເງິນກີບນຳ ທຫລ ສາຂາແຂວງຫຼວງພະບາງ ວາງອອກເປັນແຕ່ລະໄລຍະ ເພື່ອປະຕິບັດຕາມນະໂຍບາຍດັ່ງກ່າວໃຫ້ທັນເວລາ. ສອດຄ່ອງກັບການສຶກສາຂອງ Walsh & Southiseng (2010) ກ່ຽວກັບບັນຫາການແຂ່ງຂັນ ແລະ ການບໍລິຫານຂອງ SME ໃນລາວ ເຊິ່ງໃນ ແຂວງຫຼວງພະບາງ ຜົນການສຶກສາພົບວ່າ ພື້ນທີ່ນີ້ໃຊ້ອຸດສາຫະກຳທ່ອງທ່ຽວເປັນແຮງຂັບເຄື່ອນການພັດທະນາເສດຖະກິດທ້ອງຖິ່ນ ແລະ ດຶງດູດກິດຈະການໃໝ່ຈຳນວນຫຼາຍ ໝາຍຄວາມວ່າ ຜູ້ປະກອບການບໍລິການໃນ ຫຼວງພະບາງ ຈຳນວນຫຼາຍພົວພັນກັບນັກທ່ອງທ່ຽວ ແລະ ການຈ່າຍເງິນຫຼາຍສະກຸນ, ເພາະສະນັ້ນ ຄວາມຄິດເຫັນຂອງກຸ່ມນີ້ຕໍ່ນະໂຍບາຍການໃຊ້ເງິນກີບ ອາດຈະມີທັງການສະໜັບສະໜູນ ແລະ ຄວາມກັງວົນດ້ານການປະຕິບັດ ແລະ ສອດຄ່ອງກັບ ນະໂຍບາຍກົດໝາຍ ຂອງທະນາຄານແຫ່ງ ສປປ ລາວ ທີ່ເຜີຍແຜ່ໃນ ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 47/ສພຊ ວັນທີ 07 ກໍລະກົດ 2022 ທີ່ໄດ້ມີເນື້ອໃນລະບຸແນວທາງຄຸ້ມຄອງການແລກປ່ຽນ ແລະ ນຳໄປສູ່ການຊຳລະ ແລະ ການແລກປ່ຽນພາຍໃນປະເທດ ໃຫ້ດຳເນີນຜ່ານເງິນກີບເປັນຫຼັກ ເຊິ່ງເປັນແຫຼ່ງຂໍ້ມູນພື້ນຖານສຳຄັນໃນການອະທິບາຍວ່າ ຄວາມຄິດເຫັນຂອງຜູ້ປະກອບການກຳລັງຖືກຫັນໄປຕໍ່ນະໂຍບາຍໃດ ແລະ ເປັນນະໂຍບາຍທີ່ມີໃນກົດໝາຍຢ່າງຊັດເຈນ.

## 5. ສະຫຼຸບ

1) ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ການນຳໃຊ້ເງິນກີບຂອງຜູ້ປະກອບການທຸລະກິດບໍລິການ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ໃນນະຄອນຫຼວງພະບາງ ແມ່ນກວມເອົາເປີເຊັນທີ່ສູງຫຼາຍສົມຄວນ, ໃນນັ້ນ ຜູ້ປະກອບການ ມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈຫຼາຍກວ່າໝູ່ ແມ່ນດ້ານສື່ການໂຄສະນາການຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ, ຕໍ່ມາແມ່ນດ້ານການເງິນທາງທຸລະກິດຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ແລະ ສຸດທ້າຍແມ່ນ ດ້ານຄວາມເຊື່ອຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ແລະ ດ້ານຄວາມຮູ້ສຶກຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ.

2) ທັດສະນະຄະຕິຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ຕໍ່ນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ຂອງທະນາຄານແຫ່ງ ສປປ ລາວ ແມ່ນຢູ່ໃນລະດັບຫຼາຍ, ໃນນັ້ນ ຜູ້ປະກອບການໄດ້ມີຄວາມຄິດເຫັນໃນລະດັບຫຼາຍກວ່າໝູ່ແມ່ນ ຕໍ່ດ້ານການໂຄສະນາ, ຕໍ່ມາແມ່ນດ້ານການປຸກລະດົມຈິດໃຈ, ດ້ານການລົງຕິດຕາມ ແລະ ສຸດທ້າຍແມ່ນ ດ້ານການເຜີຍແຜ່.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Ajzen, I. (1991). The theory of planned behavior. *Organizational Behavior and Human Decision Processes*, 50(2), 179–211.

Bank of the Lao PDR. (2021). *Annual Report.* Vientiane: BOL.

Bank of the Lao PDR. (2022). *Monetary Policy Report.* Vientiane: BOL.

Creswell, J. W. (2014). *Research Design: Qualitative, Quantitative and Mixed Methods Approaches.* Sage.

Cronbach, L. J. (1951). Coefficient alpha and the internal structure of tests. *Psychometrika, 16*(3), 297–334.

DeVellis, R. F. (2016). *Scale development: Theory and applications* (4th ed.). Sage.

Etikan, I., Musa, S. A., & Alkassim, R. S. (2016). Comparison of Convenience Sampling and Purposive Sampling. *American Journal of Theoretical and Applied Statistics, 5*(1), 1–4.

Japan International Cooperation Agency (JICA). (2022). *Preparatory survey on a blockchain based modern payment system in Lao PDR.*

Kothari, C. R. (2004). *Research methodology: Methods and techniques* (2nd ed.). New Age International Publishers.

International Monetary Fund (IMF). (2026). *Lao People's Democratic Republic: 2025 Article IV consultation* [Country Report]. IMF.

International Monetary Fund (IMF). (2024). *Lao People's Democratic Republic: 2024 Article IV consultation* (Country Report No. 24/319). International Monetary Fund.

International Monetary Fund (IMF). (2023). *Lao P.D.R. Economic Outlook.* Washington, DC: IMF.

Likert, R. (1932). A technique for the measurement of attitudes. *Archives of Psychology, 140*, 1–55.

National Assembly. (2022). *The Law on Foreign Exchange Management (Amended).* No. 15/NA Vientiane Capital, dated 7 July 2022.


*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

Walsh, J. C., & Southiseng, N. (2010). Competition and management issues of SME entrepreneurs in Laos: Evidence from empirical studies in Vientiane Municipality, Savannakhet and Luang Prabang. *Asian Journal of Business Management, 2*(3), 57–72.

World Bank. (2024). *Lao PDR Economic Monitor: Reforms for Stability and Growth*. Economic Policy Global Practice East Asia and Pacific Region.

World Bank. (2022). *Lao PDR Economic Monitor*. Washington, DC: World Bank.

Xaiyavong, I. (2016). Currency substitution in Laos. *Asian Economic Journal, 30*(1), 67–89.